ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງຄະນະພັກນະຄອນຫຼວງວຽງຈັນ
ຄະນະປະຈຳພັກ

ເລກທີ 1410 /ຄປຈພ.ນວ
ລົງວັນທີ 20 SEP 2017

## ມະຕິຕົກລົງ
## ວ່າດ້ວຍການສືບຕໍ່ຫັນພະນັກງານລົງຮາກຖານ ຕາມວິທີການ "ຫັນລົງຮາກຖານກັບທີ່"

- ອີງຕາມມະຕິເລກທີ 03 ຂອງ ກມສພ, ລົງວັນທີ 12 ກຸມພາ 2012 ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະສ້າງບ້ານເປັນຫົວໜ່ວຍພັດທະນາ ແລະ ເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014ວ່າດ້ວຍວຽກງານ 3 ສ້າງ.
- ອີງຕາມ ຄຳສັ່ງເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ວ່າດ້ວຍມາດຕະການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.
- ສືບຕໍ່ມະຕິຂອງຄະນະປະຈຳພັກ ນວ ສະບັບເລກທີ 0715/ຄພນວ ແລະ ເລກທີ 0714/ຄພນວ, ລົງວັນທີ 10 ກຸມພາ 2016 ກ່ຽວກັບການຜັນຂະຫຍາຍວຽກງານ 3 ສ້າງໄລຍະໃໝ່.
- ອີງຕາມມະຕິຂອງກອງປະຊຸມຄະນະປະຈຳພັກ ນວ ຄັ້ງທີ 37 ສະໄໝທີ VI, ຄັ້ງວັນທີ 19 ພຶດສະພາ 2017 ແລະ ມະຕິຂອງກອງປະຊຸມອົງການປົກຄອງ ນວ ຄັ້ງທີ 11, ຄັ້ງວັນທີ 23 ສິງຫາ 2017
- ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະສະເພາະໜ້າ ຂອງ ນວ.

## ຄະນະປະຈຳພັກນະຄອນຫຼວງວຽງຈັນອອກມະຕິຕົກລົງ:

1. ໃຫ້ທຸກອົງຄະນະພັກ, ຄະນະພັກຮາກຖານ ແລະ ໜ່ວຍພັກເອກະລາດທີ່ຂຶ້ນກັບອົງຄະນະພັກ ນວ ສືບຕໍ່ຫັນເອົາສະມາຊິກພັກ, ພະນັກງານ-ລັດຖະກອນຂອງຕົນ ລົງຮາກຖານ ດ້ວຍວິທີການ "ຫັນລົງຮາກຖານກັບທີ່" ຢູ່ບ້ານຂອງຕົນເພື່ອຊ່ວຍໜູນໃຫ້ໜ່ວຍພັກ ແລະ ອົງການປົກຄອງບ້ານ ເພີ່ມຄວາມເຂັ້ມແຂງໃຫ້ການສ້າງບ້ານພັດທະນາໃນໄລຍະສະເພາະໜ້າໃຫ້ປະກົດເດັ່ນຂື້ນ ໂດຍໃຫ້ເລີ່ມແຕ່ວັນທີ 12 ຕຸລາ 2017 ໄປຈົນເຖິງ ມື້ສຳເລັດກອງປະຊຸມໃຫຍ່ຂອງອົງຄະນະພັກ ນວ ຄັ້ງທີ VII ໃນປີ 2020.

ການຫັນລົງຮາກຖານກັບທີ່ບັ້ນນີ້ ແມ່ນການນຳໃຊ້ສະມາຊິກພັກ, ພະນັກງານ-ລັດຖະກອນ ສັງກັດລັດທີ່ດຳລົງຊີວິດຢູ່ແຕ່ລະບ້ານ ລົງຊ່ວຍໜູນຢູ່ບ້ານຂອງຕົນໂດຍກົງ, ເຊິ່ງເປັນວິທີການ ຫຼື ຮູບການຈັດຕັ້ງປະຕິບັດຕົວຈິງ ໂດຍສອດຄ່ອງກັບເງື່ອນໄຂທີ່ ນວ ມີງົບປະມານຢ່າງຈຳກັດ ແລະ ທັງແມ່ນແບບແຜນເຄື່ອນໄຫວຕົວຈິງຢູ່ຮາກຖານທີ່ມີຊີວິດຊີວາ, ເຊິ່ງເກີດມາຈາກບັ້ນດຳເນີນຊີວິດການເມືອງປັບປຸງປົວແປງທົ່ວອົງຄະນະພັກ ນວ

ປີ 2017; ສະມາຊິກພັກ ແລະ ພະນັກງານການນຳຂອງພັກ ຍາມໃດກໍຕ້ອງສະໜິດຕິດພັນກັບປະຊາຊົນ, ບໍ່ຫ່າງເຫີນຈາກມະຫາຊົນ, ເປັນຮູບການໜຶ່ງທີ່ບໍ່ແມ່ນອາຍາສິດ ແລະ ພ້ອມດຽວກັນນັ້ນ ກໍສອດຄ່ອງກັບກົດລະບຽບຂອງພັກທີ່ວ່າ "ສະມາຊິກພັກດຳລົງຊີວິດຢູ່ບ່ອນໃດ ລ້ວນແຕ່ມີພັນທະໜ້າທີ່ປະກອບສ່ວນເຂົ້າໃນວຽກງານຂອງບ້ານນັ້ນໆ".

2. <u>ການລົງຮາກຖານກັບທີ່</u>ຂອງສະມາຊິກພັກ, ພະນັກງານ-ລັດຖະກອນສັງກັດລັດໃນບ້ານນັ້ນໆບໍ່ແມ່ນໄປເຮັດວຽກງານແທນລະບົບການເມືອງຂອງບ້ານນັ້ນໆ ຫາກແມ່ນການໄປຊ່ວຍໜູນໜ່ວຍພັກ-ອົງການປົກຄອງບ້ານນັ້ນໆ ໃຫ້ມີຄວາມສາມາດສ້າງບ້ານພັດທະນາໃຫ້ດີຂຶ້ນກ່ວາເກົ່າ, ແກ້ໄຂຂໍ້ຫຍຸ້ງຍາກ ແລະ ປະກົດການຫຍໍ້ທໍ້ທີ່ພົ້ນເດັ່ນໃນຂອບເຂດບ້ານນັ້ນໆ, ພ້ອມດຽວກັນນັ້ນ ສະມາຊິກພັກ, ພະນັກງານ-ລັດຖະກອນສັງກັດລັດ ຍັງຕ້ອງສະແດງໃຫ້ເຫັນຄວາມເປັນແບບຢ່າງ ແລະລັກສະນະນຳໜ້າພາທາງໃນຖານະເປັນພົນລະເມືອງດີໃນການປະຕິບັດພັນທະໜ້າທີ່, ກົດໝາຍບ້ານເມືອງ ແລະ ລະບຽບພາຍໃນບ້ານອີກດ້ວຍ.

3. ເນື້ອໃນ ແລະ ຄາດໝາຍການສືບຕໍ່ທັບລົງຮາກຖານກັບທີ່ຢູ່ ນວ ບັ້ນນີ້ຍັງແມ່ນຍຶດໝັ້ນຕາມຈິດໃຈການສ້າງບ້ານພັດທະນາ ໂດຍໃຫ້ປະຕິບັດຕາມ 4 ເນື້ອໃນ 4 ຄາດໝາຍ ຕາມມະຕິຂອງກົມການເມືອງສູນກາງພັກ ເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014 ແລະ 16 ຕົວຊີ້ວັດຂອງການສ້າງບ້ານພັດທະນາຕາມຄຳສັ່ງເລກທີ 34/ນຍ, ລົງວັນທີ 23/8/2016 ໄດ້ກຳນົດໄວ້, ພ້ອມດຽວກັນນັ້ນກໍໃຫ້ອີງໃສ່ສະພາບຕົວຈິງຂອງການເລັ່ງທວງ ແລະ ຂໍ້ຫຍຸ້ງຍາກຂອງບ້ານນັ້ນໆ ດ້ານໃດຫຍຸ້ງຍາກແມ່ນໃຫ້ວາງແຜນແກ້ໄຂໂດຍສຸມໃສ່ແກ້ໄຂດ້ານນັ້ນໃຫ້ເກີດຜົນໂດຍໄວ.

4. ເຫັນດີໃຫ້ບັນດາສະຫາຍການນຳຂັ້ນສູງ ຂອງ ນວ, ກຳມະການປະຈຳພັກ, ກຳມະການພັກ, ຫົວໜ້າພະແນກ ແລະ ຫົວໜ້າອົງການທຽບເທົ່າ ຂັ້ນພະແນກ, ພ້ອມດ້ວຍສະມາຊິກພັກ, ພະນັກງານ-ລັດຖະກອນຂອງເມືອງ, ຂອງພະແນກການ ແລະ ຂອງອົງການທຽບເທົ່າຂັ້ນພະແນກອ້ອມຂ້າງ ນວ ທີ່ດຳລົງຊີວິດຢູ່ບ້ານໃດ ແມ່ນໃຫ້ລົງຊ່ວຍໜູນຢູ່ບ້ານນັ້ນໂດຍກົງ.

- ສຳລັບສະຫາຍກຳມະການປະຈຳພັກ, ກຳມະການພັກ, ຫົວໜ້າພະແນກການແມ່ນໃຫ້ລົງຊ່ວຍໜູນບ້ານທີ່ຕົນເອງດຳລົງຊີວິດຢູ່ຕາມບັນຊີຕິດຂັດສະເພາະ.
- ສຳລັບສະມາຊິກພັກ, ພະນັກງານ-ລັດຖະກອນ ຂອງ ນວ, ຂອງເມືອງ ລວມທັງ ພະນັກງານຄູ-ອາຈານ, ແພດໝໍ ແມ່ນມອບໃຫ້ຄະນະຈັດຕັ້ງ, ຫ້ອງວ່າການ ນວ (ຂະແໜງກໍ່ສ້າງຮາກຖານການເມືອງ), ພະແນກພາຍໃນ ນວ ສົມທົບກັບ ເມືອງນັ້ນໆ ອອກບັນຊີມອບໃຫ້ບ້ານນັ້ນໆ; ແລ້ວແຈ້ງໃຫ້ສະຫາຍກ່ຽວຂ້ອງຮັບຮູ້ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ.

5. ສຳລັບລະ<u>ບອບ"ການທັບລົງຮາກຖານກັບທີ່"</u> ໃຫ້ອີງໃສ່ແຜນວຽກຂອງບ້ານເປັນເນື້ອໃນປຶກສາຫາລື ແລະ ໃຫ້ດຳເນີນການປີໜຶ່ງ 4 ຄັ້ງເປັນຢ່າງໜ້ອຍຄື: ທຸກໆວັນທີ 22 ຂອງເດືອນ 3, 6, 9 ແລະ 12.

- ມອບໃຫ້ຫ້ອງວ່າການນະຄອນຫຼວງ (ຂະແໜງກໍ່ສ້າງຮາກຖານການເມືອງ)ແລະ ພະແນກພາຍໃນຮ່ວມກັບເມືອງ (ໜ່ວຍງານກໍ່ສ້າງຮາກຖານຂອງເມືອງ)ເປັນຈຸດໃຈກາງປະສານງານກັບພາກສ່ວນກ່ຽວຂ້ອງໃນຂອບເຂດຂອງຕົນ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ມອບໃຫ້ຄະນະກວດກາພັກ-ພະ

ແພນກກວດກາລັດ ນວ ເປັນອົງກອນກວດກາການປະຕິບັດໜ້າທີ່ຂອງສະມາຊິກພັກ, ພະນັກງານ-ລັດຖະກອນທີ່ລົງຮາກຖານກັບທີ່.

6. ຫ້ອງວ່າການນະຄອນຫຼວງວຽງຈັນ, ຄະນະຈັດຕັ້ງ, ຄະນະກວດກາພັກ-ພະແນກກວດກາລັດ, ຄະນະໂຄສະນາອົບຮົມ, ພະແນກພາຍໃນ ຄະນະພັກເມືອງ, ກອງບັນຊາການທະຫານ, ກອງບັນຊາການ ປກສ ນວ, ຄະນະພັກ, ຄະນະພັກຮາກຖານ ແລະ ໜ່ວຍພັກເອກະລາດ, ທຸກການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນມະຫາຊົນ ນວ, ສະມາຊິກພັກ, ພະນັກງານ-ລັດຖະກອນ ບັນດາທ່ານທີ່ຖືກແຕ່ງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

7. ມະຕິຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຕ. ຄະນະປະຈຳພັກນະຄອນຫຼວງວຽງຈັນ

ເລຂາຄະນະພັກ

ປອ.ສິນລະວົງ ຄູດໄພທູນ

**ບ່ອນສົ່ງ**

| | |
|---|---|
| - ຄະນະຈັດຕັ້ງສູນກາງພັກ | 01 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ. |
| - ທຸກຄະນະພັກອ້ອມຂ້າງສູນກາງ | 01 ສະບັບ. |
| - ຄະນະປະຈຳພັກ, ຄະນະພັກ ນວ (ສະຫາຍລະ) | 01 ສະບັບ. |
| - ຄະນະພັກເມືອງ9 ຕົວເມືອງ | 01 ສະບັບ. |
| - ຄະນະພັກຮາກຖານ-ໜ່ວຍພັກເອກະລາດ | 01 ສະບັບ |
| - ໜ່ວຍພັກ-ອົງການປົກຄອງບ້ານ (ບ້ານລະ) | 01 ສະບັບ. |
| - ສຳເນົາ | 02 ສະບັບ. |

# ບັນຊີລາຍຊື່ພະນັກງານການນຳ
# ລົງກໍ່ສ້າງຮາກຖານການເມືອງກັບທີ່ ຢູ່ນະຄອນຫຼວງວຽງຈັນ

| | | |
|---|---|---|
| 1. | ສະຫາຍ ປອ ສິນລະວົງ ຄຸດໄພທູນ | ບ້ານ ສະພານທອງໃຕ້. |
| 2. | ສະຫາຍ ປອ ອານຸພາບ ຕຸນາລົມ | ບ້ານ ຊຽງຍືນ. |
| 3. | ສະຫາຍ ສີທຸນ ສິດທິລືໄຊ | ບ້ານ ໂພນພະເນົາ. |
| 4. | ສະຫາຍ ແກ້ວພິລາວັນ ອາໄພລາດ | ບ້ານ ນາແຮ່. |
| 5. | ສະຫາຍ ບຸນທ່ຽງ ຊຸນສີ | ບ້ານ ທ່າມ່ວງ. |
| 6. | ສະຫາຍ ບຸນທອງ ພິມມະຈັນ | ບ້ານ ໜອງບົວທອງເໜືອ. |
| 7. | ສະຫາຍ ຄຳພັນ ມາລາບັນດິດ | ບ້ານ ຕານມີໄຊ. |
| 8. | ສະຫາຍ ພັອ ສີພອນ ຈັນສົມວົງ | ບ້ານ ຫ້ວຍຫົງ. |
| 9. | ສະຫາຍ ລາດຊະນີວົງ ອະມະຣາທິທາດາ | ບ້ານ ໜອງຈັນ. |
| 10. | ສະຫາຍ ອຸດອນ ໄຊມຸນຕີ | ບ້ານ ໂພນປ່າເປົ້າ. |
| 11. | ສະຫາຍ ຈັນທະລາ ອິນທະລັງສີ | ບ້ານ ດອນໜູນ. |
| 12. | ສະຫາຍ ບຸນທາມ ພຸດທະວົງສາ | ບ້ານ ນາລ້ອງ. |
| 13. | ສະຫາຍ ວິລະສັກ ນາມມຸນຕີ | ບ້ານ ບຶງຂະຫຍອງ. |
| 14. | ສະຫາຍ ຊົງເລົາ ຍົງນູ | ບ້ານ ໜອງວຽງຄຳ. |
| 15. | ສະຫາຍ ເຂັມເພັດ ແພງດວງຈັນ | ບ້ານ ໂພນສະຫວ່າງ. |
| 16. | ສະຫາຍ ນາງ ພູວຽງ ແກ້ວວົງວິຈິດ | ບ້ານ ທ່າພະລານໄຊ. |
| 17. | ສະຫາຍ ເບີລິນ ເພັດຈັນທະລາດ | ບ້ານ ຮ່ອງແກ. |
| 18. | ສະຫາຍ ຊົມພູ ແກ້ວປັນຍາ | ບ້ານ ໜອງທາໃຕ້. |
| 19. | ສະຫາຍ ນາງ ລຳພອຍ ສີອັກຄະຈັນ | ບ້ານ ບຶງຂະຫຍອງ. |
| 20. | ສະຫາຍ ນາງ ບົວລອນ ວົງດາລາແສນ | ບ້ານ ໂພນສະຫວ່າງ. |
| 21. | ສະຫາຍ ຮສຈ ປອ ລິນຄຳ ດວງສະຫວັນ | ບ້ານ ສີສັງວອນ. |
| 22. | ສະຫາຍ ຖະໜອມ ທຳທອງ | ບ້ານ ເມືອງນ້ອຍ. |
| 23. | ສະຫາຍ ຄຳໝູນ ຕຽງທະລາດ | ບ້ານ ເພຍລາດ. |
| 24. | ສະຫາຍ ນາງ ຄຳໄພ ລັດສະໝີ | ບ້ານ ຄຳຮຸ່ງ. |
| 25. | ສະຫາຍ ວົງເດືອນ ບຸນຍະແສງ | ບ້ານ ໜອງບົວທອງ. |
| 26. | ສະຫາຍ ຄຳປະດິດ ເຂັມມານິດ | ບ້ານ ຄຳສະຫວາດ. |
| 27. | ສະຫາຍ ໂພຄຳ ໄຊຍະສອນ | ບ້ານ ໜອງບອນ. |
| 28. | ສະຫາຍ ພູຂົງ ບັນນະວົງ | ບ້ານ ສະພັງມຶກ. |
| 29. | ສະຫາຍ ພູວົງ ວົງຄຳຊາວ | ບ້ານ ດອນນົກຂຸ້ມ. |
| 30. | ສະຫາຍ ບຸນໜາ ຜາທຸມມະວົງ | ບ້ານ ດອນຕີ້ວ. |
| 31. | ສະຫາຍ ພຸດທະວົງ ບົວລະພາ | ບ້ານ ດອນນົກຂຸ້ມ. |
| 32. | ສະຫາຍ ເດດສົງຄາມ ທຳມະວົງ | ບ້ານ ໂພນທັນ. |
| 33. | ສະຫາຍ ພອນປະເສີດ ອຸນາພົມ | ບ້ານ ປ່າມ່ວງ. |
| 34. | ສະຫາຍ ແກ່ນຄຳ ທິດທິລາດ | ບ້ານ ວຽງສະຫວັນ. |
| 35. | ສະຫາຍ ບຸນເພັງ ສີນະວົງພອນ | ບ້ານ ອາມອນ. |
| 36. | ສະຫາຍ ບຸນຕາ ເທບພະວົງ | ບ້ານ ສະພັງມຶກ. |